# ບັ້ງໄຟດອກບູຮານປະກົດຄວາມມີຊີວິດຊີວາໃໝ່



## ບັ້ງໄຟດອກປະກົດຄວາມມີຊີວິດຊີວາໃໝ່

ທ່ານ ຫູຢີສວງ ທີ່ເກີດຊຸມປີ 1990 ເປັນຕົວແທນຈຳໜ່າຍຕ່າງປະເທດຂອງບໍລິສັດການຄ້າສົ່ງອອກບັ້ງໄຟດອກ ຈວນເລີ ຫຼີວຢາງ ຈຳກັດ. ໃນ 6 ເດືອນທ້າຍປີ 2019, ທ່ານ ຫູຢີສວງ ທີ່ຫາກໍ່ຮຽນຈົບຈາກອັງກິດ ໄດ້ກັບມາດຳເນີນການຄ້າກັບຕ່າງປະເທດ ຢູ່ໂຮງງານຜະລິດບັ້ງໄຟດອກ ທີ່ສ້າງຕັ້ງຂຶ້ນດ້ວຍຄົນຮຸ່ນກ່ອນ ພາຍໃຕ້ການຊັກຊວນຂອງຄົນໃນຄອບຄົວ.

ທ່ານ ຫູຢີສວງ ກ່າວວ່າ: "ແຕ່ກ່ອນ, ຂ້າພະເຈົ້າ ມີຄວາມເຫັນມາໂດຍຕະຫຼອດວ່າ ບັ້ງໄຟດອກເປັນອຸດສາຫະກຳທີ່ເກົ່າແກ່, ແຕ່ໃນຊຸມປີຜ່ານມາ, ຂ້າພະເຈົ້າ ພັດມີຄວາມຮູ້ສຶກວ່າ ບັ້ງໄຟດອກເລີ່ມປະກົດຄວາມມີຊີວິດຊີວາໃໝ່." ທ່ານ ກ່າວຕື່ມວ່າ: ຢູ່ໃນແອັບທີ່ຖືຄົນໄວໜຸ່ມເປັນຕົ້ນຕໍ ເຊັ່ນ: TikTok, ໄມໂຄຣບລັອກ, Xiaohongshu ເປັນຕົ້ນ. "ບັ້ງໄຟດອກ" ຈະເປັນຫົວຂໍ້ຈຸດສຸມທີ່ສຳຄັນ. ປັດຈຸບັນ, ຜະລິດຕະພັນບັ້ງໄຟດອກ ກໍເລີ່ມເອົາໃຈໃສ່ນຳຄົນໄວໜຸ່ມ, ໂຮງງານຜະລິດບັ້ງໄຟດອກກໍໄດ້ດຳເນີນການທົດລອງບໍ່ໜ້ອຍໃນດ້ານການອອກແບບ ທີ່ເນັ້ນໃສ່ຄົນໄວໜຸ່ມ.

ທ່ານ ຫູຢີສວງ ກ່າວຕື່ມອີກວ່າ: ພວກເຮົາໄດ້ພັດທະນາ IP ໃໝ່ຕ່າງໆ, ໄດ້ໃຊ້ສີແບບໄວໜຸ່ມຫຼາຍກວ່າເກົ່າ ແລະ ຄົ້ນຄວ້າຜະລິດຕະພັນໃໝ່ ໂດຍໄດ້ເຊື້ອເຊີນນັກອອອແບບໃໝ່ແລະນຳໃຊ້ເຕັກນິກປັນຍາປະດິດເພື່ອເພີ່ມປັດໄຈແຟຊັນໃນດ້ານວັດທະນະທຳຈີນ ຫຼາຍກວ່າເກົ່າເຂົ້າໃນການອອກແບບຮູບຫຸ້ມຫໍ່ບັ້ງໄຟດອກ, ທ່ານ ກ່າວວ່າ: ບັ້ງໄຟດອກ ຂອງໂຮງງານຕົນໄດ້ຮັບຄວາມນິຍົມຊົມຊອບນັບມື້ຫຼາຍຂຶ້ນ, ນັບແຕ່ເດືອນພະຈິກປີກາຍເປັນຕົ້ນມາ.

ຍ້ອນມີຊາວໜຸ່ມ ທີ່ຮຽນຈົບຈາກຕ່າງປະເທດຫຼາຍຄົນ ທີ່ຄ້າຍຄືກັນກັບທ່ານ ຫູຢີສວງ ເຂົ້າຮ່ວມ, ປັດຈຸບັນ, ບໍລິສັດການຄ້າສົ່ງອອກບັ້ງໄຟດອກ ຈວນເລີ ຫຼີວຢາງ ຈຳກັດ ໄດ້ສ້າງຕັ້ງເຄືອຂ່າຍຈຳໜ່າຍບັ້ງໄຟດອກ ແລະ ໝາກກະໂພກຂອງຕົນໃນ 60 ກວ່າປະເທດ ແລະ ເຂດແຄ້ວນ ໃນຂອບເຂດທົ່ວໂລກ.

ໃນຂະນະທີ່ ບັ້ງໄຟດອກຫຼີວຢາງ ໄດ້ເຮັດໃຫ້ທ້ອງຟ້າກາງຄືນຮຸ່ງແຈ້ງຂຶ້ນ, ບັ້ງໄຟດອກຫຼີວຢາງ ກໍໄດ້ເຮັດໃຫ້ຊາວໜຸ່ມທັງຫຼາຍ ໄດ້ບັນລຸຄວາມຝັນສ້າງທຸລະກິດຂອງຕົນຈົນນັບບໍ່ຖ້ວນ. ພາຍຫຼັງຮຽນຈົບຈາກມະຫາວິທະຍາໄລແລ້ວ, ທ້າວ ອູມິງຢາງ ເກີດຊຸມປີ 2000 ໄດ້ຮ່ວມມືກັບເພື່ອນມິດທີ່ມີອຸດົມການດຽວກັນ 5 ຄົນ ໂດຍໄດ້ສ້າງຕັ້ງບໍລິສັດການຄ້າບັ້ງໄຟດອກຊ້ວຍຊ້ວຍ ຫຼີວຢາງ ຈຳກັດ. ພວກເຂົາເຈົ້າໄດ້ຄົ້ນຄວ້າຕ່ອງໂສ້ອຸດສາຫະກຳບັ້ງໄຟດອກຫຼີວຢາງຢ່າງເລິກຊຶ້ງເປັນເວລາ 3 ເດືອນ ໂດຍໄດ້ໄປທັດສະນະສຶກສາ ຢູ່ວິສາຫະກິດໝາກກະໂພກ 40 ຫາ 50 ແຫ່ງ ແລະ ຮັບຮູ້ເຖິງຄວາມຕ້ອງການຂອງຊາວໜຸ່ມທັງຫຼາຍ. ໃນທີ່ສຸດ, ໄດ້ເນັ້ນໃສ່ການຜະລິດ "ບັ້ງໄຟດອກທີ່ມີຫົວຄິດປະດິດສ້າງດ້ານວັດທະນະທຳ".

ພວກເຂົາເຈົ້າ ໄດ້ເອົາການອອກແບບທີ່ມີຫົວຄິດປະດິດສ້າງ ແລະ ເຕັກນິກ ດີຈີຕອນ ປະສານສົມທົບກັບອຸດສາຫະກຳບັ້ງໄຟດອກ ໂດຍໄດ້ຜະລິດຜະລິດຕະພັນ "ຈີນທີ່ສວຍງາມ" ທີ່ເປັນບັ້ງໄຟດອກທີ່ເຕັມໄປດ້ວຍວັດທະນະທຳຈີນ. ນັບແຕ່ໄດ້ຜະລິດແຕ່ 6 ເດືອນຕົ້ນປີກາຍເປັນຕົ້ນມາ, ຍອດມູນຄ່າການຈຳໜ່າຍບັ້ງໄຟດອກ "ຈີນທີ່ສວຍງາມ" ມີຫຼາຍກວ່າ 10 ລ້ານຢວນ.ທ່ານ ອູມິງຢາງ ກ່າວວ່າ: ມີບາງຄົນເຄີຍເວົ້າວ່າ: ບັ້ງໄຟດອກ ເປັນອຸດສາຫະກຳຫຼ້າສະໄໝ, ແຕ່ຂ້ອຍບໍ່ເຫັນດີນຳ. ຄຽງຄູ່ກັບການພັດທະນາຂອງວິທະຍາສາດເຕັກໂນໂລຊີ, ພາຍໃຕ້ສະພາບການທີ່ຮັບປະກັນຄວາມປອດໄພ ແລະ ອະນຸລັກສິ່ງແວດລ້ອມໄດ້ດີກວ່າເກົ່າ. ບັ້ງໄຟດອກ ກໍມີພະລັງຊີວິດ ທີ່ເຂັ້ມແຂງ ເຊັ່ນດຽວກັນ.



ວັນທີ 8 ມີນາ ເປັນວັນແມ່ຍິງສາກົນ, ງານບັ້ງໄຟດອກທ້າຍສັບປະດາ ນະຄອນຫຼີວຢາງ ແຂວງຫູໜານ ຄັ້ງທີ 4 ປີ 2025 ໄດ້ໝູນວຽນມາເຖິງ. ການຈູດບັ້ງໄຟດອກ ປະສານສົມທົບກັບທວນໄຟ ແລະ ຂະບວນເຮືອບິນບໍ່ມີຄົນຂັບ ຊຶ່ງໄດ້ກາຍເປັນງານມະໂຫລານງົດງາມທີ່ໂລແມນຕິກ ແລະ ເຕັມໄປດ້ວຍພະລັງຂອງແມ່ຍິງທັງຫຼາຍ.

ນະຄອນຫຼີວຢາງ ໄດ້ຜະລິດບັ້ງໄຟດອກ ມາເປັນເວລາ 1.400 ກວ່າປີແລ້ວ, ປັດຈຸບັນ, ນະຄອນຫຼີວຢາງ ເປັນສູນການຜະລິດບັ້ງໄຟດອກ ແລະ ໝາກກະໂພກໃຫຍ່ທີ່ສຸດຂອງໂລກ. ປີ 2024, ມູນຄ່າການຜະລິດຂອງອຸດສາຫະກຳບັ້ງໄຟດອກ ແລະ ໝາກກະໂພກ ຂອງນະຄອນຫຼີວຢາງ ມີເຖິງ 50,2 ຕື້ຢວນ, ປະລິມານການສົ່ງອອກ ກວມ 70% ຂອງຈີນ. ບັ້ງໄຟດອກ ຂອງນະຄອນຫຼີວຢາງ ຂຶ້ນຊື່ລືນາມກໍຍ້ອນວ່າ ມີນັກທຸລະກິດຜະລິດບັ້ງໄຟດອກຮຸ່ນທີ 2 ແລະ ຜູ້ສ້າງທຸລະກິດໃໝ່ໃນຂະແໜງການບັ້ງໄຟດອກ ໂດຍຜ່ານຈາກການເອົາການປະດິດສ້າງໃໝ່ ດ້ານວິທະຍາສາດເຕັກໂນໂລຊີ ປະສານສົມທົບກັບການທ່ອງທ່ຽວວັດທະນະທຳ, ຊາວໜຸ່ມເຫຼົ່ານີ້ໄດ້ຊຸກຍູ້ໃຫ້ "ການຜະລິດຢູ່ນະຄອນຫຼີວຢາງ" ກາຍມາເປັນ "ການຜະລິດແບບມີຫົວຄິດປະດິດສ້າງ ຢູ່ນະຄອນຫຼີວຢາງ".



## ບັ້ງໄຟດອກມີຄຸນຄ່າທາງດ້ານຈິດໃຈ

ໃນຊຸມປີຜ່ານມາ, ນະຄອນຫຼີວຢາງ ໄດ້ຈັດງານບັ້ງໄຟດອກທ້າຍສັບປະດາ ແລະ ກິດຈະກຳຕ່າງໆ ໂດຍປະສານສົມທົບກັບຫົວຂໍ້ຈຸດສຸມທີ່ຊາວໜຸ່ມທັງຫຼາຍສົນໃຈ, ໄດ້ຈັດງານຈູດບັ້ງໄຟດອກປະເພດຕ່າງໆ ຮ້ອຍກວ່າຄັ້ງ, ໄດ້ດຶງດູດນັກທ່ອງທ່ຽວທັງໝົດ 5 ລ້ານກວ່າເທື່ອຄົນ ແລະ ໄດ້ຊຸກຍູ້ການບໍລິໂພກຫຼາຍກວ່າ 15 ຕື້ຢວນ.

ບໍລິສັດຄະນະລະຄອນຮວາຮິວຫູໜານ ໄດ້ເຂົ້າຮ່ວມກິດຈະກຳບັ້ງໄຟດອກເຫຼົ່ານີ້ ເກືອບທຸກຄັ້ງ. ໃນຂະນະດຽວກັນ, ບໍລິສັດດັ່ງກ່າວ ຍັງໄດ້ວາງແຜນ ແລະ ຈັດກິດຈະກຳບັ້ງໄຟດອກສຳຄັນທັງພາຍໃນ ແລະ ຕ່າງປະເທດຫຼາຍຄັ້ງ, ໂຄງການ "ແຢ້ນຢູ້" ທີ່ເປັນ IP ບັ້ງໄຟດອກຂອງບໍລິສັດດັ່ງກ່າວໄດ້ກາຍເປັນ IP ໂດ່ງດັງ ໃນການຈັດງານບັ້ງໄຟດອກແລ້ວ.

ທ່ານ ຮວງເສີງ ເກີດຫຼັງປີ 1985 ໄດ້ຮຽນຂະແໜງວິຊາວິສະວະກຳເອເລັກໂຕຣນິກຂໍ້ມູນຂ່າວສານ. ພາຍຫຼັງຮຽນຈົບຈາກມະຫາວິທະຍາໄລແລ້ວ, ທ່ານເຄີຍເຮັດວຽກໃນກຸ່ມບັ້ງໄຟດອກຫຼີວຢາງ ຊຶ່ງເຮັດໃຫ້ທ່ານ ມັກບັ້ງໄຟດອກຫຼີວຢາງທີ່ສຸດ. ທ່ານ ຮວງເສີງ ໄດ້ສ້າງຕັ້ງບໍລິສັດຄະນະລະຄອນຮວາຮິວ ໃນປີ 2014 ເພື່ອອອກແບບ ແລະ ຈັດສັນງານບັ້ງໄຟດອກເປັນການສະເພາະ ຊຶ່ງກາຍເປັນບໍລິສັດແຫ່ງທຳອິດທີ່ຈູດບັ້ງໄຟດອກຕາມຄວາມຄິດຂອງຜູ້ກຳກັບການສະແດງ.

ທ່ານ ຮວງເສີງ ເຫັນວ່າ: ຖ້າສາມາດເຮັດໃຫ້ຄົນທັງຫຼາຍມີຄວາມຮູ້ສຶກທີ່ດີ ດ້ວຍການຊົມບັ້ງໄຟດອກ, ງານບັ້ງໄຟດອກຄັ້ງນີ້ ກໍມີຄວາມໝາຍຫຼາຍ ແລະ ມີຕະຫຼາດທີ່ດີເຊັ່ນດຽວກັນ. ທ່ານຢາກເລົ່ານິທານດ້ວຍບັ້ງໄຟດອກ, "ອອກແບບບັ້ງໄຟດອກທີ່ມີເອກະລັກພິເສດ, ເພື່ອເຮັດໃຫ້ບັ້ງໄຟດອກມີຄຸນຄ່າຫຼາຍກວ່າເກົ່າ."

ປີ 2015, ບໍລິສັດຄະນະລະຄອນຮວາຮິວ ໄດ້ສະແດງລະຄອນບັ້ງໄຟດອກຢູ່ຈີນ ເປັນຄັ້ງທຳອິດ ແລະ ເລີ່ມຄົ້ນຄວ້າເອົາການສະແດງບັ້ງໄຟດອກປະສານສົມທົບກັບການທ່ອງທ່ຽວວັດທະນະທຳ ໃນປີ 2020. ປີ 2021, ບໍລິສັດດັ່ງກ່າວ ໄດ້ສ້າງຕັ້ງສະຖານທີ່ທ່ອງທ່ຽວວັດທະນະທຳແບບໃໝ່ອຸ່ມ ດ້ວຍປັດໄຈບັ້ງໄຟດອກ ທີ່ຖືກຕ້ອງກັບວິຖີການດຳລົງຊີວິດຂອງຄົນໄວໜຸ່ມ. ມາຮອດປັດຈຸບັນນີ້, ໄດ້ຈັດງານສະແດງເກືອບຮ້ອຍຄັ້ງຢູ່ 8 ຕົວເມືອງຂອງຈີນເຊັ່ນ: ນະຄອນຫຼວງປັກກິ່ງ, ນະຄອນທຽນສິນ, ນະຄອນໜານກິ່ງ ແລະ ນະຄອນອູຮັ້ນ ເປັນຕົ້ນ ຊຶ່ງໄດ້ຮັບຄວາມນິຍົມຊົມຊອບທີ່ສຸດ ຈາກຜູ້ຊົມທັງຫຼາຍ. ທ່ານ ຮວງເສີງກ່າວວ່າ: ລາຍຮັບຂອງບໍລິສັດເລີ່ມເພີ່ມຂຶ້ນຄົບເທົ່າຕໍ່ປີນັບແຕ່ປີ 2021 ແລະ ໄດ້ບັນລຸເຖິງ 90 ລ້ານກວ່າຢວນ ໃນປີກາຍນີ້. ທ່ານ ກ່າວຕື່ມວ່າ: ວັດທະນະທຳ ເຮັດໃຫ້ບັ້ງໄຟດອກ ມີສະເໜ່ຫຼາຍກວ່າເກົ່າ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

ynzhanba@163.com
laos.yunnangateway.com